**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 214013-14

9236
ເລກທີ ............/ກອຢ

ນະຄອນຫຼວງວຽງຈັນ, ວັນທີ 27 NOV 2023

# ໜັງສືແຈ້ງການ

**ຮຽນ:** ທ່ານ ຫົວໜ້າພະແນກສາທາລະນະສຸກນະຄອນຫຼວງ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຕິດຕາມກວດກາ ແລະ ເຝົ້າລະວັງກ່ຽວກັບການຈໍລະຈອນຈຳໜ່າຍຜະລິດຕະພັນຢາທີ່ປົນເປື້ອນ Ethylene Glycol ແລະ Diethylene Glycol.

- ອີງຕາມ ການແຈ້ງເຕືອນຂອງອົງການອະນາໄມໂລກລົງວັນທີ 17 ພະຈິກ 2023;
- ອີງຕາມ ການຄົ້ນຄວ້າຂອງກົມອາຫານ ແລະ ຢາ.

ອີງຕາມການແຈ້ງເຕືອນຂອງອົງການອະນາໄມໂລກ ແລະ ອົງການຄຸ້ມຄອງດ້ານຢາຂອງປະເທດປາກິດສະຖານ ກ່ຽວກັບຜະລິດຕະພັນຢາທີ່ມີການປົນເປື້ອນ Ethylene Glycol ແລະ Diethylene Glycol ເຊິ່ງການປົນເປື້ອນໃນປະລິມານສູງຈະກໍ່ໃຫ້ເກີດອັນຕະລາຍຕໍ່ສຸຂະພາບຂອງຜູ້ບໍລິໂພກ ແລະ ຮຸນແຮງເຖິງຂັ້ນເສຍຊີວິດໄດ້. ໃນເບື້ອງຕົ້ນບັນດາລາຍການຜະລິດຕະພັນຢາທີ່ປົນເປື້ອນດັ່ງກ່າວ ມີຜະລິດຕະພັນຢາທີ່ໄດ້ຮັບອະນຸຍາດຂຶ້ນທະບຽນ ແລະ ຈໍລະຈອນຈຳໜ່າຍໃນ ສປປ ລາວ ດັ່ງລາຍລະອຽດລຸ່ມນີ້:

1. ALERGO syrup ຜະລິດໂດຍໂຮງງານ Pharmix Laboratories ປະເທດປາກິດສະຖານ ນຳເຂົ້າໂດຍບໍລິສັດພູນຊັບຟາມາຈຳກັດ;
2. Ulcofin ຜະລິດໂດຍໂຮງງານ Pharmix Laboratories ປະເທດປາກິດສະຖານ ນຳເຂົ້າໂດຍບໍລິສັດພູນຊັບຟາມາຈຳກັດ (ລາຍລະອຽດເອກະສານຄັດຕິດ).

ສະນັ້ນ, ກົມອາຫານ ແລະ ຢາ ຈຶ່ງແຈ້ງມາຍັງພະແນກສາທາລະນະສຸກນະຄອນຫຼວງ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ ຈົ່ງຊີ້ນຳຕໍ່ຂະແໜງອາຫານ ແລະ ຢານະຄອນຫຼວງ-ແຂວງ ແລະ ໜ່ວຍງານອາຫານ ແລະ ຢາ ເມືອງຢູ່ໃນຂອບເຂດຮັບຜິດຊອບຂອງຕົນດັ່ງລຸ່ມນີ້:

1. ເອົາໃຈໃສ່ຕິດຕາມກວດກາການຈໍລະຈອນຈຳໜ່າຍຜະລິດຕະພັນຢາຂ້າງເທິງ ໃນກໍລະນີພົບເຫັນແມ່ນໃຫ້ຍຶດ ຫຼື ອາຍັດໄວ້ ລໍຖ້າແຈ້ງການທຳລາຍ ເຊິ່ງບໍລິສັດນຳເຂົ້າຈະເປັນຜູ້ຮັບຜິດຊອບຕໍ່ການທົດແທນເງິນຄືນໃຫ້ຮ້ານຂາຍຍ່ອຍຢາ ແລະ ຄວາມເສຍຫາຍທັງໝົດ;
2. ໃຫ້ຂໍ້ມູນຂ່າວສານແກ່ຮ້ານຂາຍຍ່ອຍຢາ ເພື່ອໃຫ້ຄວາມຮ່ວມມືໃນການຢຸດເຊົາການຈຳໜ່າຍຜະລິດຕະພັນຢາດັ່ງກ່າວ ແລະ ໃຫ້ຄວາມຮູ້ແກ່ຜູ້ບໍລິໂພກໃນການຊື້ຢາ ແລະ ຈຳແນກໄດ້ຜະລິດຕະພັນຢາທີ່ປົນເປື້ອນຕາມການແຈ້ງຂອງກົມອາຫານ ແລະ ຢາ.
3. ສະຫຼຸບລາຍງານເຖິງກົມອາຫານ ແລະ ຢາ ກ່ຽວກັບຜົນການຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ໃຫ້ຄວາມຮ່ວມມືປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ເຊັນແທນ

ຫົວໜ້າກົມ

ກະຊວງສາທາລະນະສຸກ ກົມອາຫານ ແລະ ຢາ

ສຸກສົມຄວນ ຈັນທະມາດ

สแกนด้วย CamScanner

Alergo Syrup 5mg




สแกนด้วย CamScanner




สแกนด้วย CamScanner